ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ບົດປາໄສ

ໂດຍ ທ່ານ ສະເຫຼີມໄຊ ກົມມະສິດ,

ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການຕ່າງປະເທດ

ກ່າວໃນກອງປະຊຸມພາກອະພິປາຍທົ່ວໄປ ຂອງ ສະມັດຊາໃຫຍ່ ອົງການ
ສະຫະປະຊາຊາດ ສະໄໝທີ 78

ທີ່ ນິວຢອກ, 23 ກັນຍາ 2023

ທ່ານ ປະທານ,

ກ່ອນອື່ນໝົດ, ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ມາຍັງ ພະນະທ່ານ ເດນນິສ ຟຣານຊີສ ທີ່ໄດ້ຮັບເລືອກຕັ້ງເປັນປະທານສະມັດຊາໃຫຍ່ ອົງການ ສປຊ ສະໄໝທີ 78 ແລະ ຂໍອວຍພອນໃຫ້ທ່ານ ຈົ່ງປະສົບຜົນສໍາເລັດໃນການປະຕິບັດໜ້າທີ່ອັນຊົງກຽດຂອງທ່ານ.

ປັດຈຸບັນ, ປະຊາຄົມໂລກ ກໍາລັງປະເຊີນກັບຫລາຍວິກິດການ ໃນລະດັບທີ່ພວກເຮົາບໍ່ເຄີຍປະສົບພົບພໍ້ມາກ່ອນ ລວມທັງຜົນກະທົບທີ່ຍັງສືບຕໍ່ມີຢູ່ ຈາກການລະບາດຂອງພະຍາດໂຄວິດ-19. ບັນດາປະເທດກໍາລັງພັດທະນາ ພວມປະເຊີນໜ້າກັບສິ່ງທ້າທາຍນາໆປະການ ນັບຕັ້ງແຕ່ ຄວາມທຸກຍາກທີ່ມີເພີ່ມຂຶ້ນ, ໜີ້ສິນຕໍ່ພາຍນອກ ແລະ ລະບົບການເງິນສາກົນທີ່ຂາດຄວາມຍຸຕິທໍາ ໄປຈົນເຖິງ ໄພທໍາມະຊາດທີ່ຮ້າຍແຮງເກີດຂຶ້ນຢູ່ຫຼາຍພາກພື້ນໃນໂລກ ໂດຍສະເພາະ ເຫດການໄພພິບັດທໍາມະຊາດ ທີ່ເກີດຂຶ້ນຢູ່ ປະເທດ ມາຣົກ ແລະ ລິເບຍ ໃນເມື່ອບໍ່ດົນຜ່ານມານີ້. ຂ້າພະເຈົ້າ ຂໍຮ່ວມກັບບັນດາທ່ານສະແດງຄວາມເຫັນໃຈ ແລະ ເສົ້າສະຫລົດໃຈ ຕໍ່ປະຊາຊົນ ມາຣົກ ແລະ ລິເບຍ ທີ່ໄດ້ຮັບກະທົບ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ຄວາມຫຍຸ້ງຍາກທີ່ມີຢູ່ແລ້ວ ຍິ່ງເພີ້ມທະວີຂຶ້ນ ອັນເກີດຈາກຄວາມເຄັ່ງຕຶງໃນບາງພາກພື້ນ, ບັນດາມາດຕະການບີບບັງຄັບຝ່າຍດຽວ ແລະ ຂໍ້ຂັດແຍ່ງດ້ານພູມສາດການເມືອງ ທີ່ພວມແຜ່ລາມໃນໂລກ. ບັນດາສິ່ງທັງໝົດເຫຼົ່ານັ້ນ ບໍ່ພຽງແຕ່ກີດຫນ່ວງຄວາມຄືບໜ້າດ້ານການພັດທະນາທີ່ຍາດມາໄດ້ດ້ວຍຄວາມຍາກລໍາບາກໃນຊຸມປີຜ່ານມາເທົ່ານັ້ນ, ແຕ່ຍັງກາຍເປັນໄພຂົ່ມຂູ່ ຕໍ່ການດໍາລົງຄົງຕົວ ຂອງມວນມະນຸດຢູ່ໃນໂລກ.

ໃນທ່າມກາງສະພາບການທີ່ມີຄວາມອ່ອນໄຫວຄືດັ່ງກ່າວ, ຈຶ່ງມີຄວາມຈໍາເປັນຢ່າງຍິ່ງ ທີ່ຕ້ອງມີວິທີການແກ້ໄຂບັນຫາອັນແທດເໝາະທີ່ສຸດ ເພື່ອສາມາດຮັບມືກັບບັນດາສິ່ງທ້າທາຍເຫຼົ່ານັ້ນ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ປະຊາຄົມໂລກເພີ້ມທະວີຄວາມພະຍາຍາມຮ່ວມກັນ ແລະ ຍົກສູງຄວາມເປັນເອກະພາບ ບົນພື້ນຖານຫຼັກການທີ່ກໍານົດ ໃນກົດບັດ ສປຊ ແລະ ພວກເຮົາຈໍາເປັນຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ຂອບການຮ່ວມມືຫຼາຍຝ່າຍ ເພື່ອສາມາດແກ້ໄຂບັນດາສິ່ງທ້າທາຍດັ່ງກ່າວ. ເພື່ອປົກປັກຮັກສາໂລກຂອງພວກເຮົາ ຈາກໄພພິບັດທີ່ອາດຈະເກີດຂຶ້ນຢ່າງຕໍ່ເນື່ອງ, ຍິ່ງມີຄວາມຈໍາເປັນ ທີ່ຕ້ອງຮ່ວມກັນສຸມທຸກສະຕິປັນຍາ ແລະ ຍົກສູງຄວາມຕັດສິນໃຈທາງການເມືອງທີ່ເປັນເອກະພາບກັນ. ເພື່ອບັນລຸເປົ້າຫມາຍດັ່ງກ່າວ, ມີຄວາມຈໍາເປັນຕ້ອງປະຖິ້ມຜົນປະໂຫຍດຝ່າຍດຽວ, ເດັດດ່ຽວຫຼີກເວັ້ນການປະເຊີນໜ້າກັນ ແລະ ບໍ່ໃຫ້ການແບ່ງແຍກ ລະຫວ່າງ ບັນດາປະເທດສະມາຊິກ ອົງການ ສປຊ ແຜ່ລາມອອກໄປຫລາຍກວ່ານີ້.

ບົນຈິດໃຈດັ່ງກ່າວ, ອົງການ ສປຊ ຕ້ອງໄດ້ຮັບການປະຕິຮູບ ເພື່ອໃຫ້ສາມາດປະຕິບັດພາລະບົດບາດຂອງຕົນໄດ້ຢ່າງມີປະສິດທິຜົນສູງ. ພວກເຮົາ ຮຽກຮ້ອງຕ້ອງການໃຫ້ ອົງການ ສປຊ ມີຄວາມສອດຄ່ອງ ແລະ ສາມາດປະຕິບັດຫນ້າທີ່ໄດ້ຢ່າງມີປະສິດທິຜົນຍິ່ງຂຶ້ນ ໃນທ່າມກາງສະພາບພູມສາດການເມືອງໂລກທີ່ພວມປ່ຽນແປງຢ່າງໄວວາ, ສາມາດແກ້ໄຂບັນດາສິ່ງທ້າທາຍທີ່ເປັນໄພຂົ່ມຂູ່ ຕໍ່ສັນຕິພາບ, ຄວາມໝັ້ນຄົງສາກົນ ແລະ ການພັດທະນາແບບຍືນຍົງ. ຂ້າພະເຈົ້າເຊື່ອຫມັ້ນວ່າ ໃນສະພາບປັດຈຸບັນ ພວກເຮົາມີຄວາມພ້ອມຫລາຍຂຶ້ນກວ່າເກົ່າ ເພື່ອຮັບມືກັບບັນດາສິ່ງທ້າທາຍໃນໂລກ ເຊິ່ງໃນນັ້ນ ລວມທັງ ຄວາມກ້າວຫນ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາໃຫມ່. ເຖິງຢ່າງໃດກໍຕາມ, ຖ້າ

ປາສະຈາກຄວາມມຸ້ງຫວັງຫນຶ່ງດຽວກັນ, ຄວາມຮັບຜິດຊອບ ແລະ ການເຮັດວຽກຮ່ວມກັນຂອງພວກເຮົາ, ປະຊາຊົນ ທີ່ຕົກຢູ່ໃນຄວາມສ່ຽງສູງທີ່ສຸດກວ່າຫມູ່ໃນໂລກ ກໍຈະສືບຕໍ່ຖືກປ່ອຍປະລະເລີຍ.

ທ່ານ ປະທານ,

ການແກ້ໄຂຂໍ້ຂັດແຍ່ງ ແລະ ຂໍ້ພິພາດຕ່າງໆໃນໂລກ ດ້ວຍສັນຕິວິທີ ເປັນວິທີທາງພຽງຫນຶ່ງດຽວ ໃນການຮັບປະກັນ ການຢູ່ຮ່ວມກັນໂດຍສັນຕິ ແລະ ປົກປັກຮັກສາສັນຕິພາບ ໃຫ້ຍືນຍາວ. ດ້ວຍເຫດນີ້, ພວກຂ້າພະເຈົ້າ ຮຽກຮ້ອງໃຫ້ຢຸດຕິ ຂໍ້ຂັດແຍ່ງຢູ່ ອູກຣາອິນ ທັນທີ ໂດຍຜ່ານການເຈລະຈາດ້ວຍສັນຕິວິທີ ຫລື ຖ້າຫາກບໍ່ດັ່ງນັ້ນ ພວກເຮົາຍັງຈະສືບຕໍ່ໄດ້ຮັບຜົນກະທົບ. ພ້ອມກັນນີ້, ພວກຂ້າພະເຈົ້າ ກໍຮຽກຮ້ອງໃຫ້ແກ້ໄຂບັນຫາ ຕາເວັນອອກກາງ ດ້ວຍສັນຕິວິທີ. ສປປ ລາວ ຊຸກຍູ້ໃຫ້ທຸກຝ່າຍທີ່ກ່ຽວຂ້ອງ ກັບຄືນສູ່ຂະບວນການເຈລະຈາ ແລະ ຟື້ນຟູຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ ໃນການແກ້ໄຂບັນຫາ ປາແລັສຕິນ ທີ່ແກ່ຍາວມາເປັນໄລຍະເວລາດົນນານ ໂດຍຜ່ານການສ້າງຕັ້ງ 2 ລັດເອກະລາດ ທີ່ຢູ່ຮ່ວມກັນໂດຍສັນຕິ ອີງຕາມຍັດຕິທີ່ກ່ຽວຂ້ອງຂອງ ອົງການ ສປຊ. ເຊັ່ນດຽວກັນກັບຫຼາຍປະເທດ, ສປປ ລາວ ເຊື່ອຫມັ້ນວ່າ ລັດທິຝ່າຍດຽວ ໂດຍສະເພາະ ມາດຕະການບີບບັງຄັບຝ່າຍດຽວ ບໍ່ພຽງແຕ່ຂັດກັບຫຼັກການຂອງ ກົດບັດ ສປຊ ແລະ ກົດໝາຍສາກົນເທົ່ານັ້ນ, ແຕ່ຍັງກໍ່ໃຫ້ເກີດຜົນກະທົບຢ່າງຮ້າຍແຮງ ຕໍ່ປະຊາຊົນຜູ້ບໍລິສຸດໃນໂລກ ແລະ ກີດຂວາງການພັດທະນາຂອງບັນດາປະເທດກໍາລັງພັດທະນາ. ຕໍ່ຫນ້າສະພາບການດັ່ງກ່າວ, ສປປ ລາວ ພວກຂ້າພະເຈົ້າ ສືບຕໍ່ຮ່ວມກັບວົງຄະນະຍາດສາກົນ ຮຽກຮ້ອງໃຫ້ຍົກເລີກການຂອໍ້າບາດດ້ານເສດຖະກິດຕໍ່ ກູບາ ແລະ ຖອດຖອນ ກູບາ ອອກຈາກບັນຊີລາຍຊື່ ປະເທດທີ່ສະໜັບສະໜູນການກໍ່ການຮ້າຍ ພ້ອມທັງຢຸດຕິບັນດາມາດຕະການບີບບັງຄັບຝ່າຍດຽວ.

ທ່ານ ປະທານ,

ການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ ໄດ້ດໍາເນີນມາເຖິງໄລຍະກາງສະໄໝ, ແຕ່ຫຼາຍປະເທດ ຍັງມີຄວາມຄືບໜ້າທີ່ຊັກຊ້າ. ສະນັ້ນ, ພວກເຮົາຕ້ອງສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍຄວາມພະຍາຍາມຮ່ວມກັນໃຫ້ຫລາຍຂຶ້ນ, ເຊິ່ງລວມທັງ ການນໍາໃຊ້ຜົນສໍາເລັດທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເລັ່ງລັດການພັດທະນາແບບຍືນຍົງ ແລະ ສ້າງແຮງພັກດັນອັນໃໝ່ ເພື່ອກະຕຸກຊຸກຍູ້ການເຕີບໂຕທີ່ຂັບເຄື່ອນດ້ວຍນະວັດຕະກໍາ. ໃນກອງປະຊຸມສຸດຍອດຂອງ ກຸ່ມ 77 ແລະ ຈີນ ຈັດຂຶ້ນທີ່ ນະຄອນຫຼວງ ລາຮາວານ ໃນອາທິດຜ່ານມາ, ບັນດາປະມຸກລັດ ແລະ ຫົວໜ້າລັດຖະບານຂອງ ປະເທດກໍາລັງພັດທະນາ ໄດ້ຢໍ້າຄືນວ່າ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ, ລວມທັງເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ໄດ້ກາຍເປັນພື້ນຖານສໍາຄັນ ໃນການແກ້ໄຂບັນດາສິ່ງທ້າທາຍໃນໂລກພ້ອມທັງ ເປັນກົນໄກຂັບເຄື່ອນການຫັນປ່ຽນ ເພື່ອເລັ່ງລັດຄວາມຄືບໜ້າໃນການບັນລຸ ວາລະ 2030. ຕໍ່ຫນ້າສະພາບການດັ່ງກ່າວ, ລະບອບການຄຸ້ມຄອງສາກົນ ບົນພື້ນຖານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ແມ່ນສິ່ງຈໍາເປັນ ເພື່ອ

ຊອກຮູ້ບັນຫາ ແລະ ວິທີແກ້ໄຂທີ່ຊັດເຈນ ເພື່ອຊຸກຍູ້ການພັດທະນາເສດຖະກິດແບບຍືນຍົງ, ການປົກປັກຮັກສາສິ່ງແວດລ້ອມ, ການຫຼຸດຜ່ອນຄວາມທຸກຍາກ ແລະ ແກ້ໄຂຄວາມບໍ່ສະເໝີພາບ ຢ່າງມີປະສິດທິພາບ.

ຄຽງຄູ່ກັນນັ້ນ, ເພື່ອເພີ່ມທະວີການຈັດຕັ້ງປະຕິບັດ ປພຍ, ລະບົບການພັດທະນາຂອງອົງການ ສປຊ, ຄູ່ຮ່ວມພັດທະນາ ແລະ ສະຖາບັນການເງິນສາກົນ ຕ້ອງຮ່ວມກັນປະຕິບັດວຽກງານ ຢ່າງມີການປະສານງານກັນຫລາຍກ່ວາເກົ່າ. ລະບົບການພັດທະນາຂອງ ອົງການ ສປຊ ໃນທຸກລະດັບ ຕ້ອງມີບົດບາດສຳຄັນ ໃນການລະດົມຂົນຂວາຍຊັບພະຍາກອນ ແລະ ເຮັດໜ້າທີ່ປະສານງານ, ລວມທັງ ສະໜັບສະໜູນປະເທດທີ່ມີສະພາບເງື່ອນໄຂພິເສດ ເປັນຕົ້ນ ປະເທດດ້ອຍພັດທະນາ, ປະເທດກຳລັງພັດທະນາທີ່ບໍ່ມີຊາຍແດນຕິດທະເລ, ແລະ ປະເທດເກາະດອນນ້ອຍກຳລັງພັດທະນາ ເພື່ອແກ້ໄຂບັນດາສິ່ງທ້າທາຍສະເພາະ ຂອງປະເທດເຫຼົ່ານັ້ນ.

ດັ່ງທີ່ເຫັນໄດ້ຢ່າງຈະແຈ້ງວ່າ ໜຶ່ງໃນອຸປະສັກອັນຕົ້ນຕໍທີ່ກີດຂວາງການຈັດຕັ້ງປະຕິບັດ ປພຍ ແມ່ນການສະໜອງທຶນຮອນທີ່ບໍ່ພຽງພໍ. ຂ້າພະເຈົ້າ ຂໍຍົກຕົວຢ່າງຄຳຮຽກຮ້ອງຂອງ ທ່ານ ອັນໂຕນີໂອ ກູເຕເຣສ, ເລຂາທິການໃຫຍ່ ສປຊ ທີ່ເວົ້າວ່າ "ລະບົບການເງິນສາກົນ ຂາດຄວາມຍຸຕິທຳ, ບົກພ່ອງດ້ານສິນທຳ ແລະ ຮັບໃຊ້ຜົນປະໂຫຍດສະເພາະສຳລັບປະເທດທີ່ຮັ່ງມີ". ສິ່ງດັ່ງກ່າວ ແມ່ນສັນຍານຊີ້ບອກທີ່ຊັດເຈນວ່າ ການປະຕິຮູບໂຄງສ້າງທາງດ້ານການເງິນສາກົນ ຖືເປັນວຽກງານທີ່ຮີບດ່ວນ ແລະ ແກ່ຍາວມາດົນແລ້ວ ເຊິ່ງຈະບໍ່ສາມາດເຮັດສຳເລັດໄດ້ ຖ້າຫາກປາສະຈາກການເພີ່ມທະວີບົດບາດການມີສ່ວນຮ່ວມຂອງ ບັນດາປະເທດກຳລັງພັດທະນາ ຢູ່ໃນຂະບວນການຕັດສິນບັນຫາທາງດ້ານເສດຖະກິດສາກົນ, ການກຳນົດລະບຽບການ ແລະ ການຄຸ້ມຄອງເສດຖະກິດໂລກ ແນໃສ່ດັດປັບໃຫ້ໄປຕາມສະພາບເສດຖະກິດສາກົນທີ່ມີການປ່ຽນແປງຕະຫລອດເວລາ.

ທ່ານ ປະທານ,

ເປົ້າໝາຍການພັດທະນາແບບຍືນຍົງ ບໍ່ພຽງແຕ່ເປັນເປົ້າໝາຍດ້ານການພັດທະນາຂອງສາກົນເທົ່ານັ້ນ. ສຳລັບ ສປປ ລາວ, ປພຍ ແມ່ນຄວາມໝາຍໝັ້ນໃນລະດັບຊາດ. ນອກຈາກ 17 ເປົ້າໝາຍຂອງສາກົນແລ້ວ, ສປປ ລາວ ຍັງມີ ປພຍ 18 "ເພື່ອຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ (ລບຕ)" ເປັນເປົ້າຫມາຍແຫ່ງຊາດ. ເຖິງແມ່ນວ່າ ບັນດາຕົວຊີ້ບອກຂອງ ປພຍ ໄດ້ມີຄວາມຄືບໜ້າໃນຫຼາຍລະດັບທີ່ແຕກຕ່າງກັນ ແຕ່ບັນຫາ ລບຕ ຍັງສືບຕໍ່ເປັນເປັນໄພຂົ່ມຂູ່ໃນການພັດທະນາປະເທດ ແລະ ເປັນສິ່ງກີດຂວາງການປະຕິບັດ ປພຍ ອື່ນໆ ນຳອີກ. ສະນັ້ນ, ພວກຂ້າພະເຈົ້າ ຂໍຖືໂອກາດນີ້ຮຽກຮ້ອງມາຍັງວົງຄະນາຍາດສາກົນ ເພື່ອສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປ ລາວ ໃນການແກ້ໄຂບັນຫາທີ່ແກ່ຍາວມາດົນນານ ແລະ ມີຄວາມທ້າທາຍສູງຄືດັ່ງກ່າວ.

ສຳລັບ ປພຍ ອື່ນໆ, ການເຊື່ອມສານບັນດາຕົວຊີ້ວັດ ປພຍ ເຂົ້າໃນຍຸດທະສາດແຫ່ງຊາດຂອງ ສປປ ລາວ ສະແດງໃຫ້ເຫັນ ເຖິງຄວາມຕັ້ງໃຈອັນໜັກແໜ້ນຂອງພວກເຮົາ. ເຖິງແມ່ນວ່າພວກເຮົາ ໄດ້ນຳໃຊ້ທຸກຄວາມພະຍາຍາມໃນ

ການຈັດຕັ້ງປະຕິບັດ, ແຕ່ຄວາມຄືບໜ້າ ແມ່ນບໍ່ເປັນໄປຕາມຄາດໝາຍ ເນື່ອງຈາກຍັງມີຫຼາຍ ປພຍ ມີຄວາມຄືບໜ້າຊ້າ ຫຼືຖົດຖອຍ. ປັດຈຸບັນ, ລັດຖະບານແຫ່ງ ສປປ ລາວ ພວມດຳເນີນຂະບວນການກະກຽມບົດລາຍງານແຫ່ງຊາດ ແບບສະໝັກໃຈ ສະບັບທີ 3 ເຊິ່ງຈະສຸມໃສ່ ການວິໄຈສະພາບ ແລະ ຕິດຕາມຄວາມຄືບໜ້າຂອງ ປພຍ ສະເພາະຈຳນວນໜຶ່ງ ເພື່ອໄຈ້ແຍກໃຫ້ເຫັນວ່າ ປພຍ ໃດທີ່ຍັງຕ້ອງເພີ້ມຄວາມເອົາໃຈໃສ່ ແລະ ການສະໜັບສະໜູນທີ່ເພີ່ມຂຶ້ນ. ສປປ ລາວ ຈະນຳສະເໜີບົດລາຍງານແຫ່ງຊາດແບບສະໝັກໃຈດັ່ງກ່າວຕໍ່ ກອງປະຊຸມເວທີການເມືອງລະດັບສູງ ປະຈຳປີ 2024. ພ້ອມກັນນັ້ນ, ລັດຖະບານ ສປປ ລາວ ຍັງໄດ້ອອກມາດຕະການທີ່ຈຳເປັນ ລວມທັງ ການສ້າງຍຸດທະສາດວ່າດ້ວຍ ການສະໜອງທຶນເພື່ອການພັດທະນາ ໂດຍພາຍໃຕ້ຂອບການສະໜອງທຶນແຫ່ງຊາດແບບປະສົມປະສານ, ແນໃສ່ເຮັດໃຫ້ໂຄງສ້າງການສະໜອງທຶນແຫ່ງຊາດມີຄວາມເຂັ້ມແຂງກວ່າເກົ່າ ພ້ອມທັງສ້າງກາລະໂອກາດ ໃນການຕອບສະໜອງຕໍ່ຄວາມຕ້ອງການທາງດ້ານງົບປະມານ. ໃນຄວາມພະຍາຍາມເພື່ອຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ພວກເຮົາຈະຮັບຮອງເອົາຍຸດທະສາດແຫ່ງຊາດ ເພື່ອການຂ້າມຜ່ານຢ່າງໂລ່ງລ່ຽນ ເຊິ່ງຈະຖືເປັນເຄື່ອງມືທີ່ຈະຊ່ວຍໃຫ້ລັດຖະບານ, ຄູ່ຮ່ວມພັດທະນາ ແລະ ທຸກພາກສ່ວນທີ່ກ່ຽວຂອງ ສຸມຄວາມເອົາໃຈໃສ່ຕໍ່ກັບບຸລິມະສິດດ້ານການພັດທະນາຂອງ ສປປ ລາວ, ການແກ້ໄຂຄວາມຕ້ອງການທີ່ຈຳເປັນທີ່ສຸດ ແລະ ສິ່ງທ້າທາຍຕ່າງໆ ທີ່ອາດຈະກະທົບຕໍ່ຂະບວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.

ທ່ານ ປະທານ,

ສປປ ລາວ ເປັນປະເທດໜຶ່ງທີ່ມີແຫຼ່ງຊັບພະຍາກອນທຳມະຊາດອຸດົມສົມບູນ, ພ້ອມດ້ວຍຊີວະນາໆທີ່ມີຄວາມຫລາກຫລາຍ ແລະ ຊັບພະຍາກອນນໍ້າ ທີ່ເປັນທ່າແຮງສຳລັບການພັດທະນາພະລັງງານທົດແທນ ແລະ ການລົງທຶນ ເຂົ້າໃນວຽກງານດູດຊຶມ ແລະ ກັກເກັບທາດກາກບອນ ເຊິ່ງສາມາດເຮັດໃຫ້ປະເທດ ມີທ່າແຮງສຳຄັນດ້ານການພັດທະນາ. ບົນຈິດໃຈດັ່ງກ່າວ, ພວກຂ້າພະເຈົ້າ ຈຶ່ງເຫັນໄດ້ ບົດບາດສຳຄັນຂອງ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃນການຊຸກຍູ້ວາລະດ້ານການພັດທະນາຂອງປະເທດ ເພື່ອສົ່ງເສີມການເຕີບໂຕສີຂຽວ ແລະ ທົ່ວເຖິງ, ຫັນສູ່ເສດຖະກິດ ດິຈິຕອນຫຼາຍກວ່າເສດຖະກິດທີ່ເອື່ອຍອີງໃສ່ຊັບພະຍາກອນ ແນໃສ່ເພີ່ມທະວີການນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງຍິ່ງຂຶ້ນ. ດ້ວຍເຫດນີ້, ສປປ ລາວ ຈຶ່ງໄດ້ຮັບຮອງເອົາ ຍຸດທະສາດ ແລະ ວິໄສທັດ ເພື່ອການພັດທະນາເສດຖະກິດ ດິຈິຕອນແຫ່ງຊາດ. ເຖິງແມ່ນວ່າ ສປປ ລາວ ຈະເປັນໜຶ່ງໃນບັນດາປະເທດທີ່ປ່ອຍມົນລະພິດໃນປະລິມານໜ້ອຍທີ່ສຸດ ໃນໂລກ,  ແຕ່ພວກເຮົາ ຊໍ້າພັດໄດ້ຮັບຜົນກະທົບທີ່ຮ້າຍແຮງຈາກການປ່ຽນແປງດິນຟ້າອາກາດ ຄືກັບຫຼາຍປະເທດ. ເຖິງຢ່າງໃດກໍ່ຕາມ, ພວກເຮົາມີຄວາມໝາຍໝັ້ນຢ່າງແຮງກ້າ ໃນການປະຕິບັດພັນທະສາກົນ ຕໍ່ການປ່ຽນແປງດິນຟ້າອາກາດ. ລັດຖະບານ ລາວ ໄດ້ຮັບຮອງເອົາຍຸດທະສາດແຫ່ງຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ, ແຕ່ເພື່ອຮັບປະກັນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິຜົນ, ຈຶ່ງຈຳເປັນ ຕ້ອງມີທຶນຮອນທີ່ພຽງພໍ ແລະການສະໜັບສະໜູນດ້ານເຕັກນິກວິຊາການ ເພື່ອໃຫ້ສາມາດເຂົ້າເຖິງແຫຼ່ງທຶນເພື່ອແກ້ໄຂການປ່ຽນແປງດິນຟ້າອາກາດ ແລະແຫຼ່ງທຶນອື່ນໆ ເຊິ່ງຈະເປັນການສະໜັບສະໜູນ ບັນດາປະເທດກຳລັງພັດທະນາໄດ້ເປັນຢ່າງດີ. ສປປ ລາວ ຮຽກຮ້ອງໃຫ້ປະຕິບັດຄຳໝາຍໝັ້ນໃນລະດັບສາກົນໃຫ້ສຳເລັດຜົນ ໂດຍສະເພາະ ການສະໜອງທຶນເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃຫ້ໄດ້ຈຳນວນ 100 ຕື້ໂດລາ ສະຫະລັດ ຕໍ່ປີ ໃຫ້ແກ່ບັນດາປະເທດທີ່ມີຄວາມຈຳເປັນທີ່ສຸດ. ພວກຂ້າພະເຈົ້າເຊື່ອໝັ້ນວ່າ ຜົນຂອງກອງປະຊຸມສຸດຍອດວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ ປີ 2023 ນີ້ ຈະສ້າງພື້ນຖານໃຫ້ແກ່

ການປະຕິບັດທີ່ເປັນຮູບປະທຳ ໃນໄລຍະກ້າວສູ່ ກອງປະຊຸມບັນດາລັດພາຄີຂອງ ສົນທິສັນຍາ ອົງການ ສປຊ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ 28 (COP28).

ທ່ານ ປະທານ,

ປີນີ້ ແມ່ນຄົບຮອບ 56 ປີ ແຫ່ງການສ້າງຕັ້ງປະຊາຄົມບັນດາປະຊາຊາດ ໃນອາຊີຕາເວັນອອກສຽງໃຕ້ (ອາຊຽນ). ອາຊຽນ ຊຶ່ງເປັນອົງການຈັດຕັ້ງລະຫວ່າງລັດຖະບານ ເພື່ອການຮ່ວມມືໃນພາກພື້ນ ທີ່ເວລາໃດກໍໄດ້ຢຶດໝັ້ນຕໍ່ການຮ່ວມມືພາກພື້ນ ແລະ ການຮ່ວມມືຫລາຍຝ່າຍ, ທັງມີບົດບາດເປັນແກນກາງ ໃນການປົກປັກຮັກສາ ແລະ ສົ່ງເສີມ ສັນຕິພາບ, ຄວາມໝັ້ນຄົງ ແລະ ການພັດທະນາ ໃນພາກພື້ນ. ອາຊຽນ ມີຄວາມໝາຍໝັ້ນ ເພື່ອສືບຕໍ່ການສ້າງປະຊາຄົມ ອາຊຽນ ໃຫ້ເຂັ້ມແຂງ ພ້ອມທັງສົ່ງເສີມຄວາມເປັນເອກກະພາບ ແລະ ຄວາມເປັນແກນກາງຂອງ ອາຊຽນ ໃນການພົວພັນ ແລະ ຮ່ວມມືກັບບັນດາຄູ່ຮ່ວມມືພາຍນອກ ໂດຍຜ່ານບັນດາກົນໄກທີ່ ອາຊຽນ ເປັນຜູ້ນຳພາ ແນໃສ່ສົ່ງເສີມສະພາບແວດອ້ອມ ທີ່ເອື້ອອຳນວຍໃຫ້ແກ່ ສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນກ້າວໜ້າ ໃນພາກພື້ນ ແລະ ໃນໂລກ. ສປປ ລາວ ຈະເຮັດໜ້າທີ່ເປັນປະທານອາຊຽນ ໃນປີ 2024 ພາຍໃຕ້ ຄຳຂວັນ “ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງ ໃຫ້ແກ່ ອາຊຽນ”. ສປປ ລາວ ຈະເສີມຂະຫຍາຍ ບັນດາຜົນສຳເລັດຂອງ ອາຊຽນ ເພື່ອສືບຕໍ່ສ້າງປະຊາຄົມ ອາຊຽນ ໃຫ້ເຂັ້ມແຂງ ແລະ ເຮັດແໜ້ນການພົວພັນກັບພາຍນອກ ແນໃສ່ເຮັດໃຫ້ພາກພື້ນນີ້ ມີການເຊື່ອມຈອດ ແລະ ເຂັ້ມແຂງຂຶ້ນກວ່າເກົ່າ.

ທ້າຍສຸດນີ້, ຂ້າພະເຈົ້າ ຂໍຢໍ້າຄືນ ຄວາມໝາຍໝັ້ນອັນແຮງກ້າ ຂອງ ສປປ ລາວ ຕໍ່ຂອບການຮ່ວມມືຫຼາຍຝ່າຍ ໂດຍຖືເອົາ ອົງການ ສປຊ ເປັນໃຈກາງ ພ້ອມທັງຢໍ້າຄືນຄວາມຕັດສິນໃຈອັນໜັກແໜ້ນ ໃນການຊຸກຍູ້ການຈັດຕັ້ງປະຕິບັດສາມເສົາຄໍ້າ ຂອງການພັດທະນາແບບຍືນຍົງ ຄື: ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຄືບໜ້າເພື່ອເຮັດໃຫ້ພວກເຮົາ ພ້ອມກັນກ້າວໄປ.

ຂໍຂອບໃຈ!